ລາງວັນ SUN ລາວ ການລ້ຽງລູກດ້ວຍນ້ຳນົມແມ່ຢູ່ບ່ອນເຮັດວຽກ

ມັນແມ່ນລາງວັນຫຍັງ?

ລາງວັນ SUN ລາວ ການລ້ຽງລູກດ້ວຍນ້ຳນົມແມ່ຢູ່ບ່ອນເຮັດວຽກ ແມ່ນລາງວັນປະຈຳປີ ເພື່ອຍ້ອງຍໍຊົມເຊີຍບັນດາຜູ້ຈ້າງງານ ແລະ ບ່ອນເຮັດວຽກ ທີ່ເປັນຜູ້ນຳໜ້າໃນການສົ່ງເສີມການລ້ຽງລູກດ້ວຍນ້ຳນົມແມ່ຂອງພະນັກງານຂອງຕົນ. ລາງວັນດັ່ງກ່າວແມ່ນຖືກຮັບຮູ້ໂດຍກະຊວງສາທາລະນະສຸກ ແລະ ເປັນສ່ວນໜຶ່ງຂອງເຄືອຂ່າຍປັບປຸງໂພຊະນາການໃນ ລາວ (SUN), ຊຶ່ງນຳພາໂດຍລັດຖະບານ ແລະ ສະໜັບສະໜູນໂດຍພາກທຸລະກິດ, ຜູ້ໃຫ້ທຶນຈາກສາກົນ, ອົງການຈັດຕັ້ງທາງສັງຄົມ, ສະຫະປະຊາຊາດ ແລະ ອື່ນໆ.

ເປັນຫຍັງອົງກອນຂອງຂ້ອຍຈຶ່ງຄວນເຂົ້າຮ່ວມ?

ບ່ອນເຮັດວຽກທັງໝົດໃນ ສປປ ລາວ ສາມາດເຂົ້າຮ່ວມຮັບລາງວັນໄດ້. ການເຂົ້າຮ່ວມຈະຊ່ວຍໃຫ້ບ່ອນເຮັດວຽກຂອງທ່ານ ສະແດງໃຫ້ພະນັກງານ ແລະ ລູກຄ້າຂອງທ່ານເຫັນວ່າ ທ່ານໃຫ້ຄວາມສຳຄັນກັບສຸຂະພາບ ແລະ ຄວາມເປັນຢູ່ທີ່ດີຂອງພະນັກງານ ແລະ ຄອບຄົວຂອງເຂົາເຈົ້າ. ຈະຊ່ວຍເພີ່ມຄວາມຈົງຮັກພັກດີ ແລະ ແລະ ຄວາມເພິງພໍໃຈຂອງພະນັກງານ ແລະ ຈະສ້າງຄວາມໄວ້ວາງໃຈໃຫ້ແກ່ລູກຄ້າວ່າ ບ່ອນເຮັດວຽກຂອງທ່ານມີຄ່ານິຍົມທີ່ແຂງແຮງ. ທີ່ສຳຄັນທີ່ສຸດແມ່ນເປັນການສົ່ງເສີມໃຫ້ແມ່ທີ່ເຮັດວຽກສາມາດລ້ຽງລູກດ້ວຍນ້ຳນົມແມ່ໄດ້ດົນຂຶ້ນ ເພື່ອໃຫ້ລູກຂອງເຂົາເຈົ້າມີສຸຂະພາບທີ່ດີກວ່າ.

ເມື່ອໃດ?

ໂດຍປົກກະຕິແລ້ວ ການສະໝັກຮັບລາງວັນແມ່ນຈະຢູ່ລະຫວ່າງ ***ເດືອນພຶດສະພາ -ມິຖຸນາຂອງທຸກປີ***, ແຕ່ທ່ານກໍສາມາດສົ່ງໃນໄລຍະເວລາໃດຂອງປີກໍໄດ້ເຊັ່ນກັນ. ລາງວັນການລ້ຽງລູກດ້ວຍນ້ຳນົມແມ່ຢູ່ບ່ອນເຮັດວຽກຈະຖືກມອບໃນເດືອນສິງຫາຂອງທຸກປີ ຊຶ່ງເປັນສ່ວນໜຶ່ງຂອງການສະເຫຼີມສະຫຼອງສັບປະດາສາກົນການລ້ຽງລູກດ້ວຍນ້ຳນົມແມ່.

ບ່ອນເຮັດວຽກຂອງຂ້ອຍຈະເຂົ້າຮ່ວມໄດ້ແນວໃດ?

ບ່ອນເຮັດວຽກທຸກບ່ອນສາມາດເຂົ້າຮ່ວມໄດ້ຢ່າງງ່າຍດາຍ. ພຽງປະຕິບັດຕາມ 3 ຂັ້ນຕອນງ່າຍໆດັ່ງນີ້:

1. ທົບທວນຄືນແນວທາງປະຕິບັດໃນການລ້ຽງລູກດ້ວຍນ້ຳນົມແມ່ຢູ່ບ່ອນເຮັດວຽກຂອງທ່ານ ໂດຍສົມທຽບໃສ່ເງື່ອນໄຂທີ່ເປັນແນວທາງປະຕິບັດທີ່ດີທີ່ສຸດ 10 ຂໍ້. ແນະນຳວ່າ ໃຫ້ດຳເນີນການທົບທວນຄືນຮ່ວມກັນກັບຝ່າຍບຸກຄະລາກອນ ແລະ ພະນັກງານອາວຸໂສ.
2. ຕື່ມຂໍ້ມູນໃສ່ (5-ນາທີ) ແບບຟອມອອນໄລນ໌ (ບໍ່ກາຍວັນທີ 30 ມິຖຸນາ 2024).
3. ເຂົ້າຮ່ວມໃນພິທີຮັບລາງວັນການລ້ຽງລູກດ້ວຍນ້ຳນົມແມ່ ໃນໄລຍະສັບປະດາສາກົນການລ້ຽງລູກດ້ວຍນ້ຳນົມແມ່ ໃນໄລຍະສັບປະດາສາກົນການລ້ຽງລູກດ້ວຍນ້ຳນົມແມ່ ໃນວັນທີ 1-7 ສິງຫາ 2024 ແລະ ຮັບໃບຢັ້ງຢືນ!

ຈະເຮັດແນວໃດຖ້າມີຄຳຖາມເພີ່ມເຕີມ?

ຖ້າທ່ານມີຄຳຖາມກ່ຽວກັບລາງວັນ ຫຼື ວິທີການປັບປຸງແນວທາງການປະຕິບັດການລ້ຽງລູກດ້ວຍນ້ຳນົມແມ່ຢູ່ບ່ອນເຮັດວຽກຂອງທ່ານ, ກະລຸນາຕິດຕໍ່ກອງເລຂາ SUN CSA ທີ່ info@suncsalaos.org ຫຼື ຜ່ານ ເຟສ໌ບຸກເພຈ໌. ທ່ານຍັງສາມາດຊອກຂໍ້ມູນເພີ່ມເຕີມໄດ້ທີ່ ໜ້າຂໍ້ມູນເທິງເວັບໄຊທ໌ກ່ຽວກັບລາງວັນ SUN ລາວ ການລ້ຽງລູກດ້ວຍນ້ຳນົມແມ່ຢູ່ບ່ອນເຮັດວຽກ ແລະ ໜ້າຂໍ້ມູນເທິງເວັບໄຊທ໌ກ່ຽວກັບການລ້ຽງລູກດ້ວຍນ້ຳນົມແມ່.

ເງື່ອນໄຂກ່ຽວກັບລາງວັນ SUN ລາວ ການລ້ຽງລູກດ້ວຍນ້ຳນົມແມ່ຢູ່ບ່ອນເຮັດວຽກ

ເງື່ອນໄຂສຳລັບການປັບປຸງການລ້ຽງລູກດ້ວຍນ້ຳນົມແມ່ຢູ່ບ່ອນເຮັດວຽກ ແລະ ຮັບລາງວັນ:

1. **ໃຫ້ມີນະໂຍບາຍການລ້ຽງລູກດ້ວຍນ້ຳນົມແມ່ຢ່າງເປັນລາຍລັກອັກສອນ:** ນະໂຍບາຍດັ່ງກ່າວຄວນລະບຸເຖິງສິດຂອງຜູ້ເປັນແມ່ທີ່ກຳລັງລ້ຽງລູກດ້ວຍນ້ຳນົມແມ່ຢູ່ບ່ອນເຮັດວຽກ, ລວມເຖິງສິດໃນການພັກໃນໂມງວຽກເພື່ອປ້ຳນ້ຳນົມ, ສິດໃນການເຂົ້າເຖິງພື້ນທີ່ທີ່ສາມາດໃຊ້ເພື່ອປ້ຳນົມ ແລະ ສິດໃນການນຳໃຊ້ຕູ້ເຢັນເພື່ອເກັບຮັກສານ້ຳນົມແມ່.
2. **ຈັດສັນໃຫ້ມີເວລາພັກເພື່ອໃຫ້ນົມລູກ:** ແມ່ທີ່ກຳລັງລ້ຽງລູກດ້ວຍນ້ຳນົມແມ່ ຄວນໄດ້ຮັບສິດໃນການພັກເພື່ອປ້ຳນົມ (ໂດຍບໍ່ຖືກຫັກຄ່າຈ້າງ). ໄລຍະເວລາແມ່ນຂຶ້ນຢູ່ກັບຄວາມຕ້ອງການຂອງແມ່ ແລະ ເດັກ.
3. **ຈັດສັນໃຫ້ມີສະຖານທີ່ສ່ວນຕົວສຳລັບປ້ຳນົມ ຫຼື ໃຫ້ນົມລູກ:** ສະຖານທີ່ດັ່ງກ່າວຄວນສະອາດ, ສະດວກສະບາຍ ແລະ ເປັນສ່ວນຕົວ. ຄວນມີຕູ້ເຢັນສຳລັບເກັບຮັກສານ້ຳນົມແມ່.
4. **ສະໜອງຂໍ້ມູນຂ່າວສານໃຫ້ພະນັກງານທີ່ຖືພາ ແລະ ສະໜັບສະໜູນໃຫ້ເຂົາເຈົ້າວາງແຜນການລ້ຽງລູກດ້ວຍນ້ຳນົມແມ່ເມື່ອກັບຄືນມາເຮັດວຽກ:** ຖ້າຝ່າຍບຸກຄະລາກອນ ຫຼື ພະນັກງານອາວຸໂສ ສາມາດໃຫ້ຂໍ້ມູນສະເພາະແກ່ພະນັກງານທີ່ຖືພາ ຮູ້ສຶກກ່ຽວກັບສິດຂອງເຂົາເຈົ້າ ແລະ ສະໜັບສະໜູນໃຫ້ເຂົາເຈົ້າວາງແຜນລ້ຽງລູກດ້ວຍນ້ຳນົມແມ່ ເມື່ອກັບຄືນມາເຮັດວຽກ, ພະນັກງານຈະຮູ້ສຶກກະຕືລືລົ້ນທີ່ຈະກັບໄປເຮັດວຽກໃນຂະນະທີ່ຢູ່ໃນໄລຍະຂອງການໃຫ້ນົມລູກ. ນີ້ຈະຊ່ວຍໃຫ້ນາຍຈ້າງ ແລະ ພະນັກງານສາມາດປຶກສາຫາລືກ່ຽວກັບສິ່ງທ້າທາຍທີ່ອາດຈະເກີດຂຶ້ນ ແລະ ຊ່ວຍໃຫ້ຫາຂໍ້ສະຫຼຸບຮ່ວມກັນໄດ້ວ່າຈະສາມາດຜ່ານຜ່າອຸປະສັກໃນການລ້ຽງລູກດ້ວຍນ້ຳນົມແມ່ໄດ້ຄືແນວໃດ.
5. **ຝຶກອົບຮົມໃຫ້ຜູ້ຈັດການ ແລະ ຫົວໜ້າສາຍງານ:** ຜູຈັດການ ແລະ ຫົວໜ້າສາຍງານ ูวนได้รับการฝึกอบรมกี่วันกับความสำคัญของการลี้ยงลูกด้วยน้ำนมแม่ และ สิดของผู้เป็นแม่ที่อยู่ในไลยะให้นมลูก อยู่บ่อนเฮ็ดวุยก. การฝึกอบรมนี้ ควรมีลักสะนะช่วยให้เกิดความมั่นใจว่า ผู้เป็นแม่จะสามาดสะมามาดลี้ยงลูกด้วยน้ำนมแม่ได้สำเล็ดในขะนะที่เขาเจ้ายังคึงเฮ็ดวุยก.
6. **ສ້າງສະພາບແວດລ້ອມການເຮັດວຽກທີ່ເອື້ອອຳນວຍ:** ສະພາບແວດລ້ອມການເຮັດວຽກທີ່ເອື້ອອຳນວຍ ໝາຍເຖິງສະພາບແວດລ້ອມທີ່ຜູ້ເປັນແມ່ທີ່ກຳລັງລ້ຽງລູກດ້ວຍນ້ຳນົມແມ່ຮູ້ສຶກສະບາຍໃຈທີ່ຈະປ້ຳນົມ ແລະ ພັກເພື່ອປ້ຳນົມ. ສະພາບແວດລ້ອມນີ້ສາມາດສ້າງໄດ້ໂດຍການໃຫ້ຄວາມຮູ້ ແລະ ການສະໜັບສະໜູນແກ່ຜູ້ເປັນແມ່, ຜູ້ຈັດການ ແລະ ຫົວໜ້າສາຍງານ. ຕົວຢ່າງ: ສາມາດຕິດໂພສ໌ເຕີກ່ຽວກັບເລື່ອງດັ່ງກ່າວຢູ່ໃນຫ້ອງການ.
7. **ມີຄວາມຍືດຍຸ່ນກ່ຽວກັບການເຮັດວຽກ**: ສາມາດຈັດສັນຮູບແບບການເຮັດວຽກໃຫ້ເໝາະສົມເຊັ່ນ ການເຮັດວຽກທາງໄກ ຫຼື ເລືອກໂມງເລີ່ມ ແລະ ເລີກວຽກໄດ້, ສິ່ງເຫຼົ່ານີ້ຈະຊ່ວຍໃຫ້ຜູ້ເປັນແມ່ທີ່ໃຫ້ນົມລູກສາມາດສ້າງສົມດຸນໃນການລະວ່າງວຽກ ແລະ ຄວາມຮັບຜິດຊອບຕໍ່ຄອບຄົວຂອງເຂົາເຈົ້າໄດ້.
8. **ໃຫ້ມີການລາພັກເກີດລູກໄດ້ 6 ເດືອນ**: ການທີ່ໃຫ້ລາພັກເກີດລູກໄດ້ 6 ເດືອນ ໂດຍທີ່ຍັງໄດ້ຮັບຄ່າຈ້າງຈະຊ່ວຍໃຫ້ພະນັກງານທີ່ໃຫ້ນົມລູກ ສາມາດສຸມໃສ່ການລ້ຽງລູກດ້ວຍນ້ຳນົມແມ່ຢ່າງຕໍ່ເນື່ອງຈົນຮອດ 6 ເດືອນ, ຊຶ່ງມີຄວາມສຳຄັນຕໍ່ສຸຂະພາບໃນໄລຍະຍາວຂອງເດັກ.
9. **ຈຳກັດການເດີນທາງໄປເຮັດວຽກພາກສະໜາມ ແລະ ສະໜັບສະໜູນຄ່າໃຊ້ຈ່າຍໃຫ້ຜູ້ຊ່ວຍເບິ່ງແຍງເດັກ ຫາກຈຳເປັນຕ້ອງເດີນທາງ.**
10. **ໃຫ້ການສະໜັບສະໜູນກ່ຽວກັບການລ້ຽງລູກດ້ວຍນ້ຳນົມແມ່:** ທີ່ປຶກສາດ້ານການລ້ຽງລູກດ້ວຍນ້ຳນົມແມ່ ຫຼື ຜູ້ຊ່ຽວຊານທີ່ມີຄວາມຮູ້ ສາມາດໃຫ້ການສະໜັບສະໜູນໃນເລື່ອງດັ່ງກ່າວແກ່ພະນັກງານໄດ້. ການສະໜັບສະໜູນນີ້ຈະຊ່ວຍໃຫ້ຜູ້ເປັນແມ່ ສາມາດແກ້ໄຂບັນຫາຕ່າງໆທີ່ອາດຈະເກີດຂຶ້ນກັບການລ້ຽງລູກດ້ວຍນ້ຳນົມແມ່ ແລະ ຊ່ວຍຮັບປະກັນໃຫ້ເຂົາເຈົ້າສາມາດລ້ຽງລູກດ້ວຍນ້ຳນົມແມ່ໄດ້ສຳເລັດ.